NSW HEALTH

ເຈັ້ຍຂໍ້ມູນກ່ຽວກັບພຍາດຕິດຕໍ່

# ໂຣກຕັບຊຸນິດ A

*ໂຣກຕັບຊຸນິດ **A** ແມ່ນການຕິດເຊື້ອໄວຣັສທີ່ຕັບ. ເຊື້ອໄວຣັສນີ້ແຜ່ຜາຍທາງອາຈົມ-ມາເຖິງປາກ, ຮວມທັງການກິນອາຫານ ແລະນ້ຳທີ່ມີເຊື້ອໂຣກຫຼືການຈັບຕ້ອງໂດຍ ຕິງກັບຜູ້ທີ່ມີເຊື້ອໂຣກ. ການສັກຢາປ້ອງ ກັນແລະການມີອະນາມັຍທີ່ດີສາມາດ ປ້ອງກັນການຕິດເຊື້ອໄດ້.*

**ສະບັບແກ້ໄຂປັບປຸງ:** 03 ທັນວາ 2007

## ໂຣກຕັບຊຸນິດ A ແມ່ນຫຍັງ?

ຕັບອັກເສບ ('Hepatitis') ໝາຍເຖິງການອັກເສບຫຼືອາການໃຄ່ຂອງຕັບ. ອາການນີ້ອາດເກີດຂຶ້ນຍ້ອນ ສານ ເຄມີຫຼືຢາ, ຫຼືການຕິດເຊື້ອຈາກໄວຣັສຊນິດຕ່າງໆ. ສາເຫດທົ່ວໆໄປຢ່າງນຶ່ງທີ່ເຮັດໃຫ້ເກີດການຕິດ ເຊື້ອທີ່ຕັບ ແມ່ນເກີດຈາກໄວຣັສຕັບຊຸນິດ A. ການຕິດເຊື້ອໄວຣັສຕັບຊຸນິດນຶ່ງຈະ ບໍ່ ປ້ອງກັນຈາກການ ຕິດເຊື້ອໄວຣັສຕັບຊຸນິດອື່ນໆ.

## ໂຣກນີ້ມີອາການຢ່າງໃດແດ່?

ອາການຕ່າງໆຮວມມີ ຄວາມຮູ້ສຶກບໍ່ສະບາຍ, ມີອາການເຈັບແລະປວດ, ເປັນໄຂ້, ປຸ້ນທ້ອງ, ກິນເຂົ້າບໍ່ແຊບ, ເຈັບໃນຊ່ອງທ້ອງ, ຈາກນັ້ນປັດສະວະກໍຈະເປັນສີດ້ຳ, ອາຈົມເປັນສີຊີດ ແລະ ເປັນຂີ້ໝາກເຫຼືອງ (ໜ່ວຍຕາ ແລະຜິວໜັງເປັນສີເຫຼືອງ). ຕາມປົກກະຕິ ຈະເຈັບປ່ວຍຢູ່ປະມານນຶ່ງຫາສາມອາທິດ (ເຖິງແມ່ນວ່າອາການ ບາງຢ່າງອາດເປັນດົນກວ່ານັ້ນ) ແລະ ການເຈັບປ່ວຍກໍຈະເຊົາຈົນ ຫາຍເປັນປົກກະຕິສເມີ. ເດັກນ້ອຍທີ່ຕິດ ເຊື້ອນີ້ສ່ວນຫຼາຍຈະບໍ່ມີອາການຫຍັງ. ໂຣກຕັບຊຸນິດ A ບໍ່ກໍ່ໃຫ້ເປັນພຍາດຕັບລະຍະຍາວ ແລະ ຄົນທີ່ເສັຍ ຊີວິດຍ້ອນໂຣກຕັບຊຸນິດ A ກໍມີນ້ອຍນັກນ້ອຍໜາ. ລະຍະລະຫວ່າງການຕິດເຊື້ອແລະການສໍ່ສະແດງອາການ ຕາມປົກກະຕິແມ່ນສີ່ອາທິດ, ແຕ່ວ່າມັນອາດຈະເວລາຢູ່ໃນລະຫວ່າງສອງຫາເຈັດອາທິດ.

## ເຊື້ອໂຣກນີ້ແຜ່ຜາຍຢ່າງໃດ?

ຄົນທີ່ຕິດເຊື້ອແລ້ວສາມາດແຜ່ຜາຍເຊື້ອໃຫ້ຄົນອື່ນໄດ້ນັບຈາກສອງອາທິດກ່ອນອາການຈະສໍ່ສະແດງໃຫ້ເຫັນ ຈົນເຖິງນຶ່ງອາທິດ ຫຼັງຈາກ ມີອາການຂອງຂີ້ໝາກເຫຼືອງ (ທັງໝົດແມ່ນສາມອາທິດ).
ເຊື້ອໄວຣັສຢ່າງມາກມາຍຈະມີຢູ່ໃນອາຈົມ (ຂີ້) ຂອງຄົນທີ່ຕິດເຊື້ອ ໃນລະຍະທີ່ເຊື້ອລະບາດຢູ່.

ເຊື້ອໄວຣັສນີ້ສາມາດມີຊີວິດຢູ່ໄດ້ເປັນເວລາຫຼາຍອາທິດຖ້າຢູ່ໃນສະພາບສິ່ງແວດລ້ອມມີເໝາະສົມ (ຕົວຢ່າງ ຢູ່ໃນທໍ່ນ້ຳລະບາຍນ້ຳເປື້ອນ).

ຕາມປົກກະຕິ ໂຣກຕັບຊນິດ A ຈະແຜ່ພາຍໃຫ້ກັນເມື່ອເຊື້ອໄວຣັສຈາກຄົນທີ່ຕິດເຊື້ອໄດ້ຜ່ານເຂົ້າ ໄປຫາອີກຄົນນຶ່ງ ໂດຍການ:

- ກິນອາຫານທີ່ມີເຊື້ອໂຣກ
- ດື່ມນ້ຳທີ່ມີເຊື້ອໂຣກ
- ຈັບບາຍຜ້າອ້ອມ, ຜ້າປູບ່ອນ ແລະ ຜ້າເຊັດໂຕທີ່ເປື້ອນອາຈົມຂອງຄົນທີ່ມີເຊື້ອໂຣກນີ້
- ຈັບຕ້ອງໂດຍຕົງ (ຮວມທັງການຮ່ວມເພດ) ກັບຄົນທີ່ມີເຊື້ອໂຣກນີ້.

## ມີການລາຍງານວ່າການລະບາດຂອງໂຣກຕັບ ຊນິດ A ແມ່ນເກີດຈາກສະພາບການຕ່າງໆດັ່ງນີ້:

- ແຜ່ພາຍຈາກຄົນນຶ່ງໄປຫາອີກຄົນນຶ່ງ, ຮວມເຖິງຜູ້ຊາຍທີ່ຮ່ວມເພດກັບຜູ້ຊາຍດ້ວຍກັນ
- ດື່ມນ້ຳທີ່ມີເຊື້ອໂຣກຕິດມາຈາກທໍ່ລະບາຍນ້ຳເປື້ອນ
- ກິນອາຫານທີ່ຕິດເຊື້ອໂຣກມາຈາກທໍ່ນ້ຳເປື້ອນເຊັ່ນ ອາຫານປະເພດຫອຍ
- ກິນອາຫານທີ່ຕິດເຊື້ອໂຣກຈາກຄົນຈັດອາຫານທີ່ມີເຊື້ອໂຣກ.

ການຕິດເຊື້ອຈາກໂຣກຕັບ ຊນິດ A ຍັງເປັນບັນຫາຕໍ່ເນື່ອງສຳລັບຄົນທີ່ເດີນທາງໄປຕ່າງປະເທດ, ໂດຍສະເພາະຜູ້ທີ່ເດີນທາງໄປ ຢ້ຽມຢາມປະເທດທີ່ກຳລັງພັທນາຊຶ່ງມີຄົນເປັນໂຣກຕັບຊນິດ A ກັນຢ່າງແຜ່ຫຼາຍ.

# ແມ່ນໃຜແດ່ທີ່ສ່ຽງຕໍ່ການເປັນໂຣກນີ້?

ຜູ້ທີ່ສ່ຽງຕໍ່ການຕິດໂຣກນີ້ແມ່ນຜູ້ທີ່ຍັງບໍ່ເຄີຍເປັນໂຣກຕັບ ຊນິດ A ມາກ່ອນ ແລະ ຍັງບໍ່ໄດ້ສັກຢາປ້ອງກັນ.

# ຈະປ້ອງກັນໄດ້ຢ່າງໃດ?

## ການສັກຢາປ້ອງກັນ

ໄດ້ມີວັກຊີນທີ່ປອດພັຍແລະໄດ້ຜົນສຳລັບສັກປ້ອງກັນໂຣກຕັບ ຊນິດ A ນີ້.
ຢາວັກຊີນນີ້ອາດຕ້ອງໃຊ້ເວລາເຖິງສອງອາທິດກ່ອນຈະ ອອກຣິດໃຫ້ການປ້ອງກັນເຊື້ອໂຣກໄດ້.

ມີການແນະນຳໃຫ້ຄົນຈຳພວກຂ້າງລຸ່ມນີ້ຊຶ່ງຖືວ່າມີຄວາມສ່ຽງສູງເປັນພິເສດ ໃຫ້ໄດ້ຮັບການສັກຢາປ້ອງກັນ:

- ຜູ້ທີ່ຈະເດີນທາງໄປປະເທດທີ່ ໂຣກຕັບຊນິດ A ເປັນກັນແຜ່ຫຼາຍ (ປະເທດທີ່ກຳລັງພັທນາສ່ວນຫຼາຍ)
- ຜູ້ທີ່ໄປຢ້ຽມຢາມເຂດຊົນນະບົດແລະຫ່າງໄກສອກຫຼີກ ຂອງຊຸມຊົນພື້ນເມືອງ
- ຜູ້ຊາຍທີ່ຮ່ວມເພດກັບຜູ້ຊາຍດ້ວຍກັນ
- ພະນັກງານທີ່ເຮັດວຽກທີ່ສະຖານທີ່ດູແລເດັກແລະໂຮງຮຽນອະນຸບານ
- ຜູ້ພິການທາງສມອງແລະຜູ້ດູແລເຂົາເຈົ້າ
- ພະນັກງານດູແລສຸຂພາບທີ່ເຮັດວຽກຄຽງຄູ່ກັບຊຸມຊົນພື້ນເມືອງ
- ພະນັກງານທີ່ເຮັດວຽກກັບທໍ່ລະບາຍນ້ຳເປື້ອນ

- ຊ່າງແປງທໍ່ນ້ຳ
- ຜູ້ທີ່ໃຊ້ຢາເສບຕິດໂດຍການສັກ
- ຜູ້ປ່ວຍໂຣກຕັບເຮື້ອຮັງ
- ຜູ້ທີ່ເປັນໂຣກເລືອດອອກບໍ່ຢຸດ ຊຶ່ງອາດໄດ້ຮັບການປິ່ນປົວດ້ວຍວິທີການເຮັດໃຫ້ເລືອດຂຸ້ນ.

## ມີຫຍັງອີກແດ່ຊຶ່ງເຮົາຄວນເຮັດເພື່ອຫຼີກເວັ້ນຈາກໂຣກຕັບ ຊນິດ A?

ທຸກໆຄົນຄວນລ້າງມືໃຫ້ສະອາດຖີ່ຖ້ວນດ້ວຍສະບູແລະນ້ຳກອກ ເປັນເວລາຢ່າງນ້ອຍ 10 ວິນາທີ ແລະ ເຊັດມືດ້ວຍຜ້າສະອາດ:

- ຫຼັງຈາກເຂົ້າຫ້ອງນ້ຳ
- ກ່ອນກິນອາຫານ
- ກ່ອນປຸງແຕ່ງອາຫານຫຼືເຄື່ອງດື່ມ
- ຫຼັງຈາກຈັບສິ່ງຂອງເຊັ່ນຜ້າອ້ອມແລະຖົງຢາງອະນາມັຍ.

## ຈະເຮັດຢ່າງໃດເພື່ອປ້ອງກັນບໍ່ໃຫ້ເຊື້ອໂຣກແຜ່ໄປຫາຄົນອື່ນ?

ຖ້າທ່ານມີເຊື້ອໂຣກຕັບຊນິດ A, ນອກຈາກວ່າ ຕ້ອງລ້າງມືຂອງຕົນເອງໃຫ້ສະອາດຖີ່ຖ້ວນແລ້ວ, ທ່ານຍັງຕ້ອງຫຼີກເວັ້ນກິຈກັມຂ້າງລຸ່ມນີ້ໃນຂນະທີ່ທ່ານຍັງມີເຊື້ອໂຣກຢູ່ (ໝາຍຄວາມວ່າ, ຈົນກວ່າ ເວລາຜ່ານໄປຢ່າງນ້ອຍນຶ່ງອາທິດຫຼັງຈາກມີອາການເປັນຂີ້ໝາກເຫຼືອງ):

- <u>ຢ່າ</u>ແຕ່ງອາຫານຫຼືເຄື່ອງດື່ມໃຫ້ຄົນອື່ນ
- <u>ຢ່າ</u>ໃຊ້ຖ້ວຍບ່ວງຫຼືຈອກຮ່ວມກັບຄົນອື່ນ
- <u>ຢ່າ</u>ໃຊ້ຜ້າປູບ່ອນນອນຫຼືຜ້າເຊັດໂຕຮ່ວມກັບຄົນອື່ນ
- ຫຼີກເວັ້ນບໍ່ຮ່ວມເພດ
- ໃຫ້ລ້າງຖ້ວຍບ່ວງໃນນ້ຳສະບູ, ແລະໃຫ້ຊັກຜ້າປູບ່ອນແລະຜ້າເຊັດໂຕໂດຍໃຊ້ຈັກຊັກເຄື່ອງ

## ຄົນຈຳພວກດັ່ງກ່າວຂ້າງລຸ່ມນີ້ຊຶ່ງມີເຊື້ອໂຣກຕັບຊນິດ A ບໍ່ຄວນໄປເຮັດ ການຫຼືໄປໂຮງຮຽນ ໃນລະຫວ່າງທີ່ຍັງມີເຊື້ອຢູ່:

- ຄົນທີ່ຕ້ອງຈັບບາຍອາຫານຫຼືເຄື່ອງດື່ມ
- ຄົນທີ່ວຽກຂອງຕົນຕ້ອງໄດ້ພົວພັນໃກ້ຊິດກັບຄົນອື່ນ, ເຊັ່ນຜູ້ດູແລເດັກຫຼືພະນັກງານດູແລສຸຂພາບ
- ພະນັກງານ, ເດັກນ້ອຍ ແລະ ເດັກວັຍຣຸ່ນ ບໍ່ຄວນໄປສະຖານທີ່ຝາກເດັກຫຼືໂຮງຮຽນໃນຂນະທີ່ຍັງຕິດເຊື້ອຢູ່
- ຄົນເຈັບທຸກຄົນຄວນຖາມທ່ານໝໍຂອງຕົນກ່ອນຈະກັບໄປເຮັດວຽກຫຼືໄປໂຮງຮຽນຄືນ.

## ຈະກວດຫາໂຣກນີ້ໄດ້ຢ່າງໃດ?

ການກວດຫາໂຣກນີ້ແມ່ນອີງໃສ່ອາການຂອງຄົນເຈັບແລະຈະຢັ້ງຢືນໄດ້ໂດຍການກວດເລືອດ ຊຶ່ງຈະສະແດງ ໃຫ້ເຫັນວ່າມີສານຕ້ານທານ IgM antibodies ຕໍ່ໂຣກຕັບຊນິດ A ໃນຕົວຢ່າງເລືອດທີ່ກວດນັ້ນ.

## ຈະຮັກສາໂຣກນີ້ໄດ້ຢ່າງໃດ?

ບໍ່ມີການປິ່ນປົວສະເພາະ ສໍາລັບໂຣກຕັບຊນິດ A ນີ້. ຕາມປົກກະຕິ ຄົນທີ່ຢູ່ໃນຄອບຄົວຫຼືຄູ່ຜົວເມັຍຂອງຄົນທີ່ຕິດເຊື້ອຕ້ອງໄດ້ສັກ ຢາ immunoglobulin ເຂັມນຶ່ງ. ຢາສັກນີ້ອາດປ້ອງກັນຫຼືລົດຜ່ອນຄວາມເຈັບປ່ວຍລົງໄດ້ ຖ້າວ່າໄດ້ສັກພາຍໃນສອງອາທິດ ຫຼັງຈາກທີ່ໄດ້ພົວພັນກັບຄົນທີ່ຕິດເຊື້ອ

## ທາງການສາທາຣະນະສຸກມີທ່າທີຢ່າງໃດຕໍ່ໂຣກນີ້?

- ບັນດາທ່ານໝໍ, ໂຮງໝໍ ແລະ ຫ້ອງທົດລອງຕ້ອງໄດ້ລາຍງານກໍຣະນີການຕິດເຊື້ອຂອງໂຣກຕັບຊນິດ A ແບບເກັບເປັນ ຄວາມລັບສະເພາະເຈົ້າຂອງກໍຣະນີ ໃຫ້ທາງໜ່ວຍສາທາຣະນະສຸກປະຈໍາທ້ອງຖິ່ນຮູ້.
- ທາງພະນັກງານຂອງໜ່ວຍສາທາຣະນະສຸກຈະເຮັດວຽກຮ່ວມກັບທ່ານໝໍ, ຄົນເຈັບຫຼືຄອບຄົວຂອງຄົນເຈັບເພື່ອໃຫ້ຮູ້ວ່າຄົນໃກ້ຊິດ ໃດແດ່ທີ່ສ່ຽງຕໍ່ການຕິດເຊື້ອ ເພື່ອໃຫ້ເຂົາເຈົ້າໄດ້ຮູ້ເຖິງຂໍ້ມູນຣາຍລະອຽດຂອງພຍາດນີ້. ພະນັກງານຂອງຜແນກສາທາຣະນະສຸກ ຈະໄດ້ອີງຕາມກົດລະບຽບສະເພາະໃນການຄວບຄຸມກໍຣະນີຂອງຄົນຕິດເຊື້ອໂຣກຕັບຊນິດ A ສໍາລັບຜູ້ທີ່ເຮັດວຽກຫຼືໄປທີ່ ສູນດູແລເດັກ, ແລະ ຜູ້ທີ່ຕ້ອງໄດ້ຈັບບາຍອາຫານສໍາລັບການຄ້າຂາຍ.

ນອກນີ້ ພະນັກງານຂອງໜ່ວຍສາທາຣະນະສຸກຍັງຕ້ອງຕິດຕາມກວດສອບເບິ່ງການລະບາດຂອງໂຣກຕັບຊນິດ A ເພື່ອໃຫ້ຮູ້ເຖິງສາເຫດຂອງການລະບາດ, ຫາວິທີຄວບຄຸມ ແລະ ປ້ອງກັນບໍ່ໃຫ້ມີການຕິດເຊື້ອຂຶ້ນຕື່ມ.

## ຣາຍລະອຽດເພີ້ມເຕີມ - ຜແນກສາທາຣະນະສຸກແຫ່ງຣັດ NSW

ຖ້າທ່ານຕ້ອງການຣາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ທ່ານໝໍຂອງທ່ານ, ຜແນກສາທາຣະນະສຸກທ້ອງຖິ່ນ ຫຼື ສູນອະນາໄມຊຸມຊົນ - ໃຫ້ເບິ່ງພາຍໃຕ້ຫົວຂໍ້ຣັຖບານປະຈໍາຣັດ *NSW Government* ທາງໜ້າຂອງສມຸດ ໂທຣະສັບ (White Pages).

| ເຂດໃນຕົວເມືອງ | ສະຖານທີ່ | ເລກໂທຣະສັບ | ເຂດຊົນນະບົດ | ສະຖານທີ່ | ເລກໂທຣະສັບ |
|---|---|---|---|---|---|
| **Northern Sydney/Central Coast** | Hornsby | 02 9477 9400 | **Greater Southern** | Goulburn | 02 4824 1837 |
| | Gosford | 02 4349 4845 | | Albury | 02 6080 8900 |
| **South Eastern Sydney/Illawarra** | Randwick | 02 9382 8333 | **Greater Western** | Broken Hill | 08 8080 1499 |
| | Wollongong | 02 4221 6700 | | Dubbo | 02 6841 5569 |
| **Sydney South West** | Camperdown | 02 9515 9420 | | Bathurst | 02 6339 5601 |
| **Sydney West** | Penrith | 02 4734 2022 | **Hunter/New England** | Newcastle | 02 4924 6477 |
| | Parramatta | 02 9840 3603 | | Tamworth | 02 6767 8630 |
| **Justice Health Service** | Matraville | 02 9311 2707 | **North Coast** | Port Macquarie | 02 6588 2750 |
| **NSW Department of Health** | Nth Sydney | 02 9391 9000 | | Lismore | 02 6620 7500 |
| **NSW Health: www.health.nsw.gov.au** | | | | | |